ຄຳແນະນຳໃນການໝາຍຄະແນນ

| ຄວາມສາມາດ | ຕ້ອງໄດ້ປັບປຸງ(1-3) | ໄດ້ຕາມຄາດໝາຍ(4-6) | ໄດ້ເກີນຄາດໝາຍ(7-9) |
|---|---|---|---|
| **ການສອບຖາມປະຫວັດພະຍາດ** | ຖາມປະຫັວດບໍ່ເປັນຂັ້ນຕອນ ແລະ ຂາດຂໍ້ມູນທີ່ຈະສະໜັບສະໜູນການບົ່ງມະຕິຈຳແນກ. | ໂດຍທົ່ວໄປແມ່ນຖາມປະຫັວດເປັນຂັ້ນຕອນ ແລະ ຂໍ້ມູນທີ່ໄດ້ຮັບຈະຊ່ວຍສະໜັບສະໜູນການບົ່ງມະຕິຈຳແນກໄດ້ພໍປະມານ. | ຖາມປະຫັວດຢ່າງເປັນເປັນຂັ້ນຕອນ ແລະ ຖືກຕ້ອງ ແລະ ໃຊ້ຄຳຖາມທີ່ເລັງໃສ່ເພື່ອຊ່ວຍສະໜັບສະໜູນການບົ່ງມະຕິຈຳແນກ. |
| **ການກວດກາຮ່າງກາຍ** | ກວດກາຮ່າງກາຍບໍ່ເປັນຂັ້ນຕອນ, ບໍ່ນິ້ມນວນ ແລະ ບໍ່ສຸພາບ. | ກວດເປັນຂັ້ນຕອນ, ນິ້ມນວນ ແລະ ສຸພາບ ແລະເນັ້ນໃສ່ການກວດທີ່ກ່ຽວຂ້ອງກັບກໍລະນີນັ້ນໆ. | ກວດຢ່າງເປັນຂັ້ນຕອນ, ນິ້ມນວນ ແລະ ສຸພາບຕໍ່ຄົນເຈັບທີ່ສຸດ ແລະ ເນັ້ນໃສ່ການກວດທີ່ສະເພາະເຈາະຈົງກັບກໍລະນີນັ້ນໆ. |
| **ການສື່ສານກັບຄົນເຈັບ** | ບໍ່ມີຄວາມຊັດເຈນໃນການສື່ສານ. ມີຄວາມຫຍຸ້ງຍາກໃນການຕອບສະໜອງຕໍ່ຄຳເວົ້າຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. ອາດກ້າວໄປສູ່ພາວະຂາດຄວາມເຄົາລົບນັບຖື. | ໂດຍທົ່ວໄປແມ່ນມີຄວາມຊັດເຈນໃນການສື່ສານ ແລະ ຕອບສະໜອງຕໍ່ຄຳເວົ້າຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. ສະແດງຄວາມຄວາມເຄົາລົບນັບຖືໄດ້ຢ່າງເໝາະສົມ ແລະ ສາມາດເຮັດໃຫ້ຄົນເຈັບເຊື່ອຖືໄດ້. | ມີຄວາມຊັດເຈນທີ່ສຸດໃນການສື່ສານ ແລະ ຕອບສະໜອງຕໍ່ຄຳເວົ້າຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. ສະແດງໃຫ້ເຫັນເຖິງຄວາມເຄົາລົບນັບຖືໄດ້ຢ່າງເໝາະສົມ, ເຫັນອົກເຫັນໃຈ ແລະ ສະແດງໃຫ້ເຫັນເຖິງຄວາມໜ້າເຊື່ອຖື. |
| **ການໃຫ້ເຫດຜົນ** | ສະແດງໃຫ້ເຫັນເຖິງຄວາມສາມາດໃນການວິເຄາະຂໍ້ມູນທີ່ໄດ້ຮັບມາເພື່ອໃຊ້ໃນການບົ່ງມະຕິຈຳແນກໄດ້ພຽງເລັກນ້ອຍ. | ສະແດງໃຫ້ເຫັນເຖິງຄວາມສາມາດໃນການວິເຄາະຂໍ້ມູນທີ່ໄດ້ຮັບມາເພື່ອໃຊ້ໃນການບົ່ງມະຕິຈຳແນກໄດ້. | ສະແດງໃຫ້ເຫັນເຖິງຄວາມສາມາດໃນການວິເຄາະຂໍ້ມູນທີ່ໄດ້ຮັບມາເພື່ອໃຊ້ໃນການບົ່ງມະຕິຈຳແນກທີ່ເປັນໄປໄດ້ຫຼາຍທີ່ສຸດໄດ້ຢ່າງຄ່ອງແຄ້ວ. |
| **ການບໍລິຫານເວລາ** | ບໍລິຫານເວລາບໍ່ຄ່ອຍໄດ້ດີ. | ບໍລິຫານເວລາໄດ້ດີ. | ບໍລິຫານເວລາໄດ້ດີຫຼາຍ. |
| **ການກວດເພີ້ມເຕີມໃນເບື້ອງຕົ້ນ** | ຂາດຄວາມສາມາດໃນການໄຈ້ແຍກການກວດເພີ້ມເຕີມທີ່ເໝາະສົມກັບອາການ. ບໍ່ສາມາດໃຫ້ເຫດຜົນທີ່ເໝາະສົມໃນການສັ່ງກວດ. | ໂດຍທົ່ວໄປສາມາດໄຈ້ແຍກການກວດເພີ້ມເຕີມທີ່ເໝາະສົມກັບອາການ ແລະ ສາມາດໃຫ້ເຫດຜົນທີ່ເໝາະສົມໃນການສັ່ງກວດ. | ໄຈ້ແຍກການກວດເພີ້ມເຕີມທີ່ເໝາະສົມກັບອາການໄດ້ດີທີ່ສຸດ ແລະ ສາມາດໃຫ້ເຫດຜົນໄດ້ຢ່າງຖືກຕ້ອງ ແລະ ຊັດເຈນ. |
| **ແຜນການປິ່ນປົວທີ່ເປັນພື້ນຖານ** | ໃຫ້ການປິ່ນປົວທີ່ບໍ່ປອດໄພ, ບໍ່ສອດຄ່ອງ ແລະ ບໍ່ເໝາະສົມ. | ໃຫ້ການປິ່ນປົວທີ່ເໝາະສົມ, ປອດໄພ ແລະ ມີເຫດຜົນ. | ໃຫ້ການປິ່ນປົວໄດ້ຢ່າງກວມລວມ ແລະ ມີປະສິດທິພາບ. |
| **ການໃຫ້ຂໍ້ມູນແກ່ຄົນເຈັບ** | ການໃຫ້ຂໍ້ມູນແມ່ນບໍ່ຊັດເຈນ ແລະ ບໍ່ເໝາະສົມກັບອາການທີ່ເປັນຢູ່. ຂາດການກັ່ນຕອງຄວາມຮູ້ ແລະ ພຶດຕິກຳທີ່ມີຢູ່ຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. | ໂດຍທົ່ວໄປການໃຫ້ຂໍ້ມູນແມ່ນຊັດເຈນ ແລະເໝາະສົມກັບຄວາມເປັນຈິງ. ມີການກັ່ນຕອງຄວາມຮູ້ ແລະ ພຶດຕິກຳທີ່ມີຢູ່ຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. | ການໃຫ້ຂໍ້ມູນແມ່ນມີຄວາມຊັດເຈນຫຼາຍທີ່ສຸດ ແລະ ເໝາະສົມກັບຄວາມເປັນຈິງ. ມີການກັ່ນຕອງຄວາມຮູ້ ແລະ ພຶດຕິກຳທີ່ມີຢູ່ຂອງຄົນເຈັບ ຫຼື ຜູ້ດູແລຄົນເຈັບ. |
| **ສະຫຼຸບ** | **ທັກສະຂອງນັກສຶກສາແມ່ນໄດ້ຕ່ຳກວ່າລະດັບຄາດໝາຍ. ຕ້ອງໄດ້ປະຕິບັດຄືນໃໝ່.** | **ທັກສະຂອງນັກສຶກສາແມ່ນໄດ້ຕາມລະດັບຄາດໝາຍ.** | **ທັກສະຂອງນັກສຶກສາແມ່ນໄດ້ເກີນລະດັບຄາດໝາຍ.** |